ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 04/ສປປ

ລົງວັນທີ--------

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການດັດແກ້ລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ
ແລະ ເພີ່ມອັດຕາອາກອນຊົມໃຊ້.

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V , ມາດຕາ 53 ຂໍ້ 2 ;

- ອີງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 40/ຄປຈ ລົງວັນທີ 5 ທັນວາ 1996 ວ່າດ້ວຍການດັດແກ້ລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ແລະເພີ່ມອັດຕາອາກອນຊົມໃຊ້.

- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 10/ຄປຈ ລົງວັນທີ 5 ທັນວາ 1996 ກ່ຽວກັບການສະເໜີໃຫ້ອອກລັດຖະບັນຍັດ ກ່ຽວກັບການດັດແກ້ລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ແລະ ເພີ່ມອັດຕາອາກອນຊົມໃຊ້.

ປະທານປະເທດ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະບັນຍັດ :

**ມາດຕາ 1** : ເພີ່ມອັດຕາອາກອນຊົມໃຊ້ ແລະ ດັດແກ້ລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ດັ່ງນີ້ :

<u>ເພີ່ມອັດຕາອາກອນຊົມໃຊ້</u> :

| | ອັດຕາ ອ.ກ.ຊ | | ອ.ກ.ຊ ເພີ່ມ |
|---|---|---|---|
| - ນ້ຳມັນແອັດຊັງທຳມະດາ | 20% | + | 21 ກີບ |
| - ນ້ຳມັນກາຊວນ | 10% | + | 10 ກີບ |

<u>ລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ</u> :

- ນ້ຳມັນແອັດຊັງທຳມະດາ 330 ກີບ/ລິດ.
- ນ້ຳມັນກາຊວນ 329 ກີບ/ລິດ.

<u>ມາດຕາ 2</u> : ມອບໃຫ້ລັດຖະບານເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດ ສະບັບນີ້.

<u>ມາດຕາ 3</u> : ລັດຖະບັນຍັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ່ 9 ທັນວາ 1996.

ປະທານປະເທດ

ໜູຮັກ ພູມສະຫວັນ